ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 84 /ນຍ

ນະຄອນຫຼວງວຽງຈັນ, ລົງວັນທີ 25 ທັນວາ 2022

# ດຳລັດ
## ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ 5 ປີ ຄັ້ງທີ IX (2021-2025)

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ມະຕິຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 20/ສພຊ, ລົງວັນທີ 26 ມີນາ 2021 ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ IX (2021-2025) ສະບັບປັບປຸງ;
- ອີງຕາມ ມະຕິຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 21/ສພຊ, ລົງວັນທີ 26 ມີນາ 2021 ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ 5 ປີ (2016-2020) ແລະ ທິດທາງແຜນງົບປະມານແຫ່ງລັດ 5 ປີ (2021-2025).

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ຈຸດປະສົງ, ທິດທາງລວມ, ເປົ້າໝາຍ ແລະ ຄາດໝາຍສູ້ຊົນ

### ມາດຕາ 1 ຈຸດປະສົງ

1. ເພື່ອເປັນບ່ອນອີງໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍບັນດາທິດທາງ, ຄາດໝາຍ ແລະ ແຜນວຽກຈຸດສຸມທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ 5 ປີ ຄັ້ງທີ IX (2021-2025) ເປັນອັນລະອຽດ ແລະ ເອກະພາບໃນຂອບເຂດທົ່ວປະເທດ;

2. ເພື່ອກຳນົດໜ້າທີ່ຄວາມຮັບຜິດຊອບ ແລະ ກົນໄກປະສານງານຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ 5 ປີ ຄັ້ງທີ IX (2021-2025) ໃຫ້ມີຄວາມກົມກຽວ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ.

### ມາດຕາ 2 ທິດທາງລວມ

1. ສືບຕໍ່ກະກຽມຄວາມພ້ອມຮອບດ້ານ ເພື່ອນຳພາປະເທດຊາດອອກຈາກສະຖານະພາບດ້ອຍພັດທະນາ; ປະຊາຊົນມີວຽກເຮັດງານທຳ, ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນ ແລະ ໄດ້ຮັບຜົນປະໂຫຍດຢ່າງ

ທົ່ວເຖິງ, ມີຄວາມສະເໝີພາບ ແລະ ທ່ຽງທຳ; ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ສ້າງສັງຄົມໃຫ້ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ; ພັດທະນາເສດຖະກິດ-ສັງຄົມໃຫ້ມີຄວາມສົມດຸນ ລະຫວ່າງ ການພັດທະນາເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ, ສືບຕໍ່ຈັດຕັ້ງຜັນຂະຫຍາຍຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຮອດປີ 2030 ໃຫ້ມີປະສິດທິຜົນສູງ;

2. ບຸກທະລຸແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ, ອຸປະສັກຕ່າງໆ ຂອງການພັດທະນາໃນໄລຍະຜ່ານມາ, ແກ້ໄຂຄວາມຫຍຸ້ງຍາກທາງດ້ານການເງິນ-ເງິນຕາ ຢ່າງມີປະສິດທິພາບ, ກຽມພ້ອມຮັບມືກັບສິ່ງທ້າທາຍທີ່ເກີດຂຶ້ນໃນໄລຍະໃໝ່ ເປັນຕົ້ນແມ່ນ ຜົນກະທົບຈາກພະຍາດໂຄວິດ-19, ການປ່ຽນແປງດິນຟ້າອາກາດ ແລະ ສະພາບທີ່ບໍ່ແນ່ນອນຂອງພາກພື້ນ ແລະ ສາກົນ;

3. ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ເພື່ອເປັນປັດໄຈທີ່ສຳຄັນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ; ສ້າງການເຕີບໂຕເສດຖະກິດທີ່ມີຄຸນນະພາບ ດ້ວຍການປະຕິຮູບໂຄງສ້າງເສດຖະກິດໃໝ່ໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນ; ເສີມຂະຫຍາຍປັດໄຈ ແລະ ທ່າແຮງບົ່ມຊ້ອນຂອງຊາດ ໂດຍນຳໃຊ້ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ (ICT) ທີ່ເໝາະສົມ ໃຫ້ກາຍເປັນໂອກາດ, ກຳລັງແຮງ ແລະ ເປັນພື້ນຖານການຜະລິດ ແລະ ການບໍລິການທີ່ເປັນປາຍແຫຼມ, ເປັນຫົວຈັກໃຫ້ແກ່ການເຕີບໂຕ ເພື່ອສ້າງພື້ນຖານໃຫ້ມີຄວາມເຂັ້ມແຂງ ແລະ ເປັນເຈົ້າຕົນເອງເພິ່ງຕົນເອງ ທາງດ້ານເສດຖະກິດເປັນກ້າວໆ.

## ມາດຕາ 3 ເປົ້າໝາຍ

ເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ມີດັ່ງນີ້:

1. ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ;

2. ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນທີ່ສາມາດຕອບສະໜອງຄວາມຕ້ອງການຂອງພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທະພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ;

3. ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ.

4. ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ;

5. ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ ໃຫ້ເກີດປະໂຫຍດສູງສຸດ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ;

6. ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ.

## ມາດຕາ 4 ຄາດໝາຍສູ້ຊົນ

ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍ ຕາມການຮັບຮອງຂອງມະຕິກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 20/ສພຊ, ລົງວັນທີ 26 ມີນາ 2021 (ສະບັບປັບປຸງ) ແລະ ບັນດາຄາດໝາຍທີ່ໄດ້ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ມີຜົນສຳເລັດ ມີດັ່ງນີ້:

1. ຄາດໝາຍດ້ານເສດຖະກິດມະຫາພາກ.

(1). ການເຕີບໂຕເສດຖະກິດ:

- ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວ ສະເລ່ຍໃນລະດັບ 4% ຂຶ້ນໄປ ຕໍ່ປີ, ຄິດເປັນມູນຄ່າຕາມລາຄາໃນປີ 1.056.692 ຕື້ກີບ, ໃນປີ 2025 ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ ໃຫ້ບັນລຸໄດ້ 2.880 ໂດລາສະຫາລັດ, ລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນ ໃຫ້ໄດ້ 2.280 ໂດລາສະຫາລັດ ໃນນີ້:
    - + ຂະແໜງກະສິກຳ ຂະຫຍາຍຕົວ ສະເລ່ຍ 2,5%;
    - + ຂະແໜງອຸດສາຫະກຳ ຂະຫຍາຍຕົວ ສະເລ່ຍ 4,1%;
    - + ຂະແໜງບໍລິການ ຂະຫຍາຍຕົວ ສະເລ່ຍ 6%;
    - + ພາສີ-ອາກອນ ຂະຫຍາຍຕົວ ສະເລ່ຍ 5,8%.
- ຮອດປີ 2025 ສູ້ຊົນໃຫ້ໂຄງປະກອບເສດຖະກິດ ຂະແໜງກະສິກຳ ກວມເອົາ 15,3%, ຂະແໜງອຸດສາຫະກຳ ກວມເອົາ 32,3%, ຂະແໜງບໍລິການ ກວມເອົາ 40,7% ແລະ ພາສີ-ອາກອນ ກວມເອົາ 11,7% ຂອງລວມຍອດຜະລິດຕະພັນພາຍໃນ (GDP).

(2). ດ້ານເງິນຕາ:

- ຮັບປະກັນສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ;
- ຄວບຄຸມປະລິມານເງິນ (M2) ຂະຫຍາຍຕົວບໍ່ເກີນ 20% ຕໍ່ປີ;
- ອັດຕາແລກປ່ຽນເງິນກີບທຽບກັບເງິນໂດລາສະຫາລັດ ເໜັງຕີງໃນຂອບ ±5% ຕໍ່ປີ;
- ອັດຕາເງິນເຟີ້ ສະເລ່ຍບໍ່ເກີນ 6%;
- ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດ ຢູ່ໃນລະດັບ ທີ່ສາມາດກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 3 ເດືອນ;
- ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ໃຫ້ຢູ່ໃນລະດັບ 60% ຂອງ GDP;
- ຍອດເຫຼືອສິນເຊື່ອຂອງທະນາຄານທຸລະກິດໃຫ້ຢູ່ໃນລະດັບ 49% ຂອງ GDP;
- ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທົ່ວລະບົບທະນາຄານ ສະເລ່ຍໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດເຫຼືອສິນເຊື່ອທັງໝົດ.

(3). ດ້ານງົບປະມານ:

- ສູ້ຊົນເກັບລາຍຮັບງົບປະມານທັງໝົດ ບໍ່ໃຫ້ຫຼຸດ 179.500 ຕື້ກີບ ເທົ່າກັບ 17,0% ຂອງ GDP;
- ລາຍຈ່າຍທັງໝົດ ບໍ່ໃຫ້ເກີນ 190.000 ຕື້ກີບ ເທົ່າກັບ 18,0% ຂອງ GDP;
- ຂາດດຸນງົບປະມານທັງໝົດ 10.500 ຕື້ກີບ ເທົ່າກັບ 1% ຂອງ GDP ຫຼື ສູງສຸດບໍ່ເກີນ 2% ຂອງ GDP.

(4). ດ້ານການລົງທຶນເພື່ອການພັດທະນາ:

- ສູ້ຊົນລະດົມການລົງທຶນທັງໝົດ ໃຫ້ໄດ້ ປະມານ 204.599 ຕື້ກີບ ເທົ່າກັບ 19,4% ຂອງ GDP, ໃນນີ້:

+ ການລົງທຶນຈາກງົບປະມານພາຍໃນ ໃຫ້ໄດ້ 22.950 ຕື້ກີບ ເທົ່າກັບ 11% ຂອງການລົງທຶນທັງໝົດ;
+ ການລົງທຶນຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ(ODA) ໃຫ້ໄດ້ 37.344 ຕື້ກີບ ເທົ່າກັບ 18% ຂອງການລົງທຶນທັງໝົດ;
+ ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 100.000 ຕື້ກີບ ເທົ່າກັບ 49% ຂອງການລົງທຶນທັງໝົດ;
+ ການລົງທຶນອື່ນໆ ໃຫ້ໄດ້ 44.305 ຕື້ກີບ ເທົ່າກັບ 22% ຂອງການລົງທຶນທັງໝົດ.

(5). ການຄ້າກັບຕ່າງປະເທດ:

- ມູນຄ່າການສົ່ງອອກສິນຄ້າ 38.043,5 ລ້ານໂດລາສະຫາລັດ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ;
- ມູນຄ່າການນໍາເຂົ້າສິນຄ້າ 32.927,3 ລ້ານໂດລາສະຫາລັດ ຫຼື ຂະຫຍາຍຕົວສະເລ່ຍບໍ່ເກີນ 9% ຕໍ່ປີ.

2. ຄາດໝາຍຂະແໜງການເສດຖະກິດ.

(1). ຂະແໜງກະສິກໍາ:

- ສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ໄດ້ 3,5-4 ລ້ານໂຕນ ຕໍ່ປີ, ທຽບໃສ່ປີ 2020 ເພີ່ມຂຶ້ນ 500.000 ໂຕນ ຫຼື ປະມານ 14%;
- ການປູກພືດເປັນສິນຄ້າສະເລ່ຍຕໍ່ປີ: ກາເຟ ໃຫ້ໄດ້ 175.500 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 17.310 ໂຕນ ຫຼື ປະມານ 10,9%, ສາລີອາຫານສັດ ໃຫ້ໄດ້ 636.900 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 118.774 ໂຕນ ຫຼື ປະມານ 22,9%, ມັນຕົ້ນ ໃຫ້ໄດ້ 3,6 ລ້ານໂຕນ, ອ້ອຍ ໃຫ້ໄດ້ 1,6 ລ້ານໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 400.000 ກວ່າໂຕນ ຫຼື ປະມານ 34,3%, ກ້ວຍ ໃຫ້ໄດ້ 735.500 ໂຕນ ທຽບໃສ່ປີ 2020 ເພີ່ມຂຶ້ນ 14.396 ໂຕນ ຫຼື ປະມານ 1,9%;
- ການຂະຫຍາຍຝູງສັດ ໃຫ້ຢູ່ໃນລະດັບ 3-4% ຕໍ່ປີ ຫຼື ສະໜອງຊີ້ນ ແລະ ໄຂ່ ໃຫ້ໄດ້ 340.000 ໂຕນ ຫຼື ເພີ່ມຂຶ້ນ 7,8% ທຽບໃສ່ປີ 2020;
- ການສົ່ງອອກສິນຄ້າກະສິກໍາ ໃຫ້ໄດ້ ສະເລ່ຍ 1.200 ລ້ານໂດລາສະຫາລັດຕໍ່ປີ ທຽບໃສ່ປີ 2020 ເພີ່ມຂຶ້ນ 400 ລ້ານໂດລາສະຫາລັດ.

(2). ຂະແໜງອຸດສາຫະກໍາ ແລະ ການຄ້າ:

- ມູນຄ່າການຜະລິດອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ໃຫ້ໄດ້ 83.079,8 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ;
- ມູນຄ່າຈໍລະຈອນສິນຄ້າ 424.227,5 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ.

(3). ຂະແໜງພະລັງງານ ແລະ ບໍ່ແຮ່:

- ການຜະລິດກະແສໄຟຟ້າ ໃຫ້ໄດ້ 276.096 ລ້ານກິໂລວັດໂມງ (ເພີ່ມຂຶ້ນ 70% ທຽບໃສ່ແຜນການ 5 ປີ ຄັ້ງທີ VIII (2016-2020) ຂອງຂະແໜງພະລັງງານ ແລະ ບໍ່ແຮ່), ມູນຄ່າການຜະລິດ ໃຫ້ໄດ້ 140.879 ຕື້ກີບ (ເພີ່ມຂຶ້ນ 79% ທຽບໃສ່ແຜນການ 5 ປີ ຄັ້ງທີ VIII

(2016-2020) ຂອງຂະແໜງພະລັງງານ ແລະ ບໍ່ແຮ່), ສົ່ງອອກກະແສໄຟຟ້າ ໃຫ້ໄດ້ ປະມານ 5.000 ເມກາວັດ;

- ມູນຄ່າການຜະລິດແຮ່ທາດ (ບໍ່ທັນປຸງແຕ່ງ) ໃຫ້ໄດ້ 7.832,1 ລ້ານໂດລາສະຫາລັດ (ເພີ່ມຂຶ້ນ 4% ທຽບໃສ່ແຜນການ 5 ປີ ຄັ້ງທີ VIII (2016-2020) ຂອງຂະແໜງພະລັງງານ ແລະ ບໍ່ແຮ່), ມູນຄ່າການຈຳໜ່າຍແຮ່ທາດ ໃຫ້ໄດ້ 8.336,4 ລ້ານໂດລາສະຫາລັດ. ໃນນີ້, ຈຳໜ່າຍພາຍໃນ 1.974 ລ້ານໂດລາສະຫາລັດ ແລະ ຈຳໜ່າຍໄປຕ່າງປະເທດ 6.362,4 ລ້ານໂດລາສະຫາລັດ;
- ສຳຫຼວດສ້າງຂໍ້ມູນພື້ນຖານທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1/200.000 ໃນເຂດທີ່ບໍ່ໄດ້ປະຕິບັດ ຈຳນວນ 74.696 ກິໂລຕາແມັດ (ເທົ່າກັບ 31,5% ຂອງເນື້ອທີ່ທົ່ວປະເທດ).

(4). ຂະແໜງບໍລິການ:

- ປະລິມານຂົນສົ່ງສິນຄ້າ ໃນຕາໜ່າງການເຊື່ອມໂຍງ-ເຊື່ອມຈອດ ກັບບັນດາປະເທດໃນພາກພື້ນໃນທຸກຮູບແບບການຂົນສົ່ງຕໍ່ປີ ປະກອບມີ: ທາງບົກ ຂະຫຍາຍຕົວ 7%, ທາງນ້ຳ ຂະຫຍາຍຕົວ 5%, ທາງອາກາດ ຂະຫຍາຍຕົວ 12%, ທາງລົດໄຟ ຂະຫຍາຍຕົວ 10% ແລະ ປະລິມານຂົນສົ່ງຜູ້ໂດຍສານຕໍ່ປີ ປະກອບມີ: ທາງບົກ ຂະຫຍາຍຕົວ 7%, ທາງນ້ຳ ຂະຫຍາຍຕົວ 5%, ທາງອາກາດ ຂະຫຍາຍຕົວ 12%, ທາງລົດໄຟ ຂະຫຍາຍຕົວ 7%;
- ຂະຫຍາຍສະຖານີຮັບສົ່ງສັນຍານມືຖື ລະບົບ 3G ຄອບຄຸມໃຫ້ໄດ້ 100%, 4G ໃຫ້ໄດ້ 90% ແລະ ລະບົບ 5G ຄອບຄຸມໄດ້ຕົວເມືອງໃຫຍ່ ໃນ 18 ແຂວງທົ່ວປະເທດ, ສ້າງໃຫ້ມີສູນສຳຮອງສູນອິນເຕີເນັດແຫ່ງຊາດ ໃຫ້ໄດ້ 2 ແຫ່ງ.

3. ຄາດໝາຍດ້ານວັດທະນະທຳ-ສັງຄົມ.

(1). ຂະແໜງສຶກສາທິການ ແລະ ກິລາ:

- ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຂັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດບໍ່ໃຫ້ຫຼຸດ 86% ໃນ 2025;
- ອັດຕານັກຮຽນເຂົ້າໃໝ່ ປ.1 ໃຫ້ບັນລຸສູງກວ່າ 98%;
- ອັດຕາເຂົ້າຮຽນໃໝ່ລວມຂັ້ນ ປ.5 ໃຫ້ບັນລຸສູງກວ່າ 99%;
- ອັດຕາປະລະການຮຽນຂັ້ນ ປ.1 ໃຫ້ຫຼຸດຈາກ 6,4% ຫຍັງເຫຼືອ 4%;
- ອັດຕາຈົບຊັ້ນປະຖົມສຶກສາໃຫ້ບັນລຸສູງກວ່າ 95%;
- ອັດຕາການເລື່ອນຂັ້ນຈາກ ປ.5 ຫາ ມ.1 ໃຫ້ບັນລຸສູງກວ່າ 90%;
- ອັດຕາປະລະຂອງນັກຮຽນຊັ້ນປະຖົມໃຫ້ຫຼຸດລົງຈາກ 4,3% ຍັງເຫຼືອ 2%;
- ດັດຊະນີສະເໝີພາບຍິງ-ຊາຍ ຂອງອັດຕາເລື່ອນຂັ້ນຈາກ ປ.5 ຫາ ມ.1 ໃຫ້ບັນລຸໄດ້ລະຫວ່າງ 0,97-1,03;
- ອັດຕາການເຂົ້າຮຽນໃໝ່ລວມຂັ້ນ ມ.4 ໃຫ້ບັນລຸສູງກວ່າ 74%;
- ອັດຕາປະລະຊັ້ນມັດທະຍົມຕອນຕົ້ນໃຫ້ຫຼຸດຈາກ 10,3% ຍັງເຫຼືອ 8%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນໃຫ້ໄດ້ຮັບການບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 150.000 ຄົນ;

- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ບໍ່ໃຫ້ຫຼຸດ 10% ຕໍ່ປີ;
- ສຸຊຸກຍູ້ໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 5% ທຽບໃສ່ຈຳນວນນັກຮຽນທີ່ຈົບມັດທະຍົມຕອນຕົ້ນ ພາຍໃນປີ 2025;
- ສຸຊຸກຍູ້ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນຢູ່ມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ໃຫ້ໄດ້ 12.500 ຄົນ;
- ສັດສ່ວນມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍະກຳ ບັນລຸໄດ້ 50% ຂອງພົນລະເມືອງທັງໝົດ.

(2). ຂະແໜງສາທາລະນະສຸກ:

- ສຸຊຸກຍູ້ເຮັດໃຫ້ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕໍ່າກວ່າມາດຕະຖານໃຫ້ຍັງເຫຼືອ 15% ຂອງປະຊາກອນເປົ້າໝາຍ;
- ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງບໍ່ໄດ້ມາດຕະຖານ ໃຫ້ຍັງເຫຼືອ 27% ຂອງປະຊາກອນເປົ້າໝາຍ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃຫ້ຍັງເຫຼືອ 20/1.000 ຂອງເດັກນ້ອຍເກີດມີຊີວິດ;
- ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ຍັງເຫຼືອ 30/1.000 ຂອງເດັກນ້ອຍເກີດມີຊີວິດ;
- ອັດຕາສ່ວນການຕາຍຂອງແມ່ໃຫ້ຍັງເຫຼືອ 110/100.000 ຂອງເດັກນ້ອຍເກີດມີຊີວິດ;
- ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງປະຊາກອນເປົ້າໝາຍ;
- ອັດຕາການສັກຢາວັກຊີນກັນພະຍາດໃນເດັກລຸ່ມ 1 ປີ ໃຫ້ໄດ້ 95% ຂອງປະຊາກອນເປົ້າໝາຍ;
- ອັດຕາການຊົມໃຊ້ນ້ຳສະອາດ ໃຫ້ໄດ້ 95% ຂອງປະຊາກອນທັງໝົດ;
- ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 85% ຂອງຄອບຄົວທັງໝົດ;
- ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ໃຫ້ໄດ້ 96% ຂອງປະຊາກອນທັງໝົດ;
- ອັດຕາການປະກາດ ແລະ ຮັບຮອງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 85% ຂອງຈຳນວນບ້ານທັງໝົດ.

(3). ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ:

- ພັດທະນາສີມືແຮງງານຢູ່ສະຖາບັນ ແລະ ສູນພັດທະນາສີມືແຮງງານໃນລະດັບຕ່າງໆ ໃຫ້ໄດ້ 10.000 ຄົນ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 5.000 ຄົນ;
- ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍແຮງງານ ພັດທະນາສີມືແຮງງານ ຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 25.000 ຄົນ;
- ສົ່ງເສີມການຈັດຫາວຽກເຮັດງານທຳ ໃນຕະຫຼາດແຮງງານຕາມຂະແໜງເສດຖະກິດພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 392.197 ຄົນ ແລະ ຫຼຸດຜ່ອນອັດຕາການຫວ່າງງານ ເປັນ 15% ໃນປີ 2025 ຕາມຂະແໜງການເສດຖະກິດຢູ່ພາຍໃນ ແລະ ຕ່າງປະເທດ;

- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 157.500 ຄົນ, ໃນນີ້ ຜູ້ປະກັນຕົນ ພາກລັດ 7.500 ຄົນ, ພາກວິສາຫະກິດ 135.000 ຄົນ ແລະ ຜູ້ສະໝັກໃຈ 15.000 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 16.000 ຄົນ, ໃນນີ້ 5 ເປົ້າໝາຍບຸລິມະສິດ ໃຫ້ໄດ້ 15.000 ຄົນ ແລະເປົ້າໝາຍທົ່ວໄປ ໃຫ້ໄດ້ 1.000 ຄົນ;
- ກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ, ເຂດຊຸມຊົນ, ເຂດຈຸດສຸມທຸລະກິດ ໃຫ້ໄດ້ 50.000 ເຮັກຕາ, ຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍຈາກລະເບີດບໍ່ທັນແຕກ ໃຫ້ຕໍ່າກວ່າ 40 ຄົນ/ປີ, ໃຫ້ຄວາມຊ່ວຍເຫຼືອຜູ້ປະສົບອຸປະຕິເຫດຈາກລະເບີດບໍ່ທັນແຕກໃນການປິ່ນປົວ, ຟື້ນຟູສຸຂະພາບຈິດ, ໜ້າທີ່ການ, ຝຶກວິຊາຊີບ ແລະ ປະກອບອາຊີບ ໃຫ້ໄດ້ 5.760 ຄົນ ຂອງຈຳນວນຜູ້ທີ່ໄດ້ຮັບເຄາະຮ້າຍທັງໝົດ 9.607 ຄົນ;
- ປຸກລະດົມ ແລະ ຮັບບໍລິຈາກເລືອດ ໃຫ້ໄດ້ 364.400 ຖົງ, ໃນນີ້ ຢູ່ສູນເລືອດແຫ່ງຊາດ 151.530 ຖົງ ແລະ ທ້ອງຖິ່ນຕ່າງໆ 211.870 ຖົງ;
- ສູ້ຊົນສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນສູນກາງ 1 ແຫ່ງ, ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ 18 ແຫ່ງ ແລະ ຂັ້ນເມືອງ 56 ແຫ່ງ.

(4). ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- ສ້າງ ແລະ ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງ ໃຫ້ໄດ້ 36 ຈຸດ ແລະ ຂະຫຍາຍໂທລະໂຄ່ງຢູ່ຂັ້ນບ້ານ ໃຫ້ໄດ້ 2.800 ບ້ານ;
- ຂະຫຍາຍລະບົບເຕັກນິກ ຈາກລະບົບອານາລັອກໄປສູ່ລະບົບດິຈິຕອນ ໃຫ້ໄດ້ 22 ຈຸດ ໃນຂອບເຂດທົ່ວປະເທດ;
- ຊຸກຍູ້ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 130.000 ຄອບຄົວ, ບ້ານວັດທະນະທຳ ໃຫ້ໄດ້ 750 ບ້ານ;
- ສືບຕໍ່ສະເໜີມໍລະດົກແຫ່ງຊາດທາງທຳມະຊາດ ຫີນໜາມໜໍ່, ແຂວງຄຳມ່ວນ ເຂົ້າເປັນມໍລະດົກໂລກ;
- ສູ້ຊົນສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນທະບຽນໃນຂະແໜງວັດທະນະທຳ ຄື: ສຳຫຼວດແຫຼ່ງບູຮານວິທະຍາ ໃຫ້ໄດ້ 35 ແຫ່ງ ແລະ ຂຸດຄົ້ນ ໃຫ້ໄດ້ 5 ແຫ່ງ; ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພະພຸດທະຮູບ 5 ແຫ່ງ; ຂຶ້ນບັນຊີມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດຈາກລະດັບທ້ອງຖິ່ນ ໃຫ້ເປັນລະດັບຊາດໃຫ້ໄດ້ 20 ແຫ່ງ ແລະ ຂຶ້ນທະບຽນບັນຊີບູຮານງານພຸດທະສິນ ໃຫ້ໄດ້ 5 ແຫ່ງ;
- ດຶງດູດນັກທ່ອງທ່ຽວເຂົ້າມາລາວ ໃຫ້ໄດ້ປະມານ 15 ລ້ານເທື່ອຄົນ, ສ້າງລາຍຮັບໃຫ້ໄດ້ 3.813 ລ້ານໂດລາສະຫະລັດ (ໃນກໍລະນີມີວັກຊີນປ້ອງກັນໂຄວິດ-19);
- ສຳຫຼວດ, ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວ ໃຫ້ໄດ້ 30 ແຫ່ງ.

4. ດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ:

(1). ອັດຕາຄວາມທຸກຍາກ ໃຫ້ຫຼຸດລົງຈາກ 18,3% ຍັງເຫຼືອ 13,9% ຂອງປະຊາກອນທັງໝົດ;

(2). ສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 204.360 ຄອບຄົວ (ເພີ່ມຂຶ້ນຈາກ 964.149 ຄອບຄົວ ມາເປັນ 1.168.509 ຄອບຄົວ);

(3). ສ້າງບ້ານພົ້ນທຸກ ໃຫ້ໄດ້ 3.104 ບ້ານ (ເພີ່ມຂຶ້ນຈາກ 4.792 ບ້ານ ມາເປັນ 7.896 ບ້ານ);

(4). ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ (ເພີ່ມຂຶ້ນຈາກ 53 ເມືອງ ມາເປັນ 122 ເມືອງ);

(5). ສ້າງຄອບຄົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ (ເພີ່ມຂຶ້ນຈາກ 736.996 ຄອບຄົວ ມາເປັນ 982.750 ຄອບຄົວ);

(6). ສ້າງບ້ານພັດທະນາ ໃຫ້ໄດ້ 4.420 ບ້ານ (ເພີ່ມຂຶ້ນຈາກ 747 ບ້ານ ມາເປັນ 5.167 ບ້ານ);

(7). ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ໄດ້ 10 ບ້ານ;

(8). ຈັດສັນພູມລຳເນົາຄົງທີ່ ແລະ ອາຊີບໝັ້ນຄົງ ໃຫ້ປະຊາຊົນ ຢູ່ 25 ຈຸດສຸມ;

(9). ສ້າງສະຫະກອນການຜະລິດ ແລະ ການບໍລິການ ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 18 ຫົວໜ່ວຍ.

5. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:

(1). ສູ້ຊົນເນື້ອທີ່ດົນປ່າໄມ້ ເພີ່ມຂຶ້ນ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025;

(2). ປູກໄມ້ ໃຫ້ໄດ້ 200.000 ເຮັກຕາ, ຟື້ນຟູປ່າໄມ້ ໃຫ້ໄດ້ 1.800.000 ເຮັກຕາ ແລະ ຍົກລະດັບປ່າສະຫງວນແຫ່ງຊາດຂຶ້ນເປັນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ ໃນປີ 2025 (ປ່າສະຫງວນແຫ່ງຊາດ ເຊປ້ຽນ, ດົງຫົວສາວ, ພູເຂົາຄວາຍ, ນ້ຳກ່ານ ແລະ ນ້ຳກະດິງ);

(3). ສະຫຼຸບ ແລະ ປະເມີນຄືນ ຮູບແບບການລົງທຶນເພື່ອຮັກສາ ແລະ ຟື້ນຟູປ່າໄມ້ ເປັນຕົ້ນ ປ່າຍອດນ້ຳ ເຊິ່ງມີລັດ, ເອກະຊົນ ແລະ ປະຊາຊົນເຂົ້າຮ່ວມໃນຮູບແບບຂອງນ້ຳກັດຍໍລະປ່າ ເພື່ອຈັດຕັ້ງຜັນຂະຫຍາຍຕົວແບບດັ່ງກ່າວໃຫ້ກວ້າງຂວາງອອກຕື່ມ ເປັນຕົ້ນ ເຂດປ່າຍອດນ້ຳ, ເຂດປົກປັກຮັກສາຊີວະນາໆພັນ, ພ້ອມທັງ ເປັນການຊຸກຍູ້ສົ່ງເສີມການທ່ອງທ່ຽວແບບອະນຸລັກທຳມະຊາດຕາມທິດຍືນຍົງ;

(4). ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 1,6 ລ້ານຕອນ ໃນຂອບເຂດທົ່ວປະເທດ, ພ້ອມທັງຫັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝ;

(5). ສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ໃຫ້ສຳເລັດ ໃນຂອບເຂດທົ່ວປະເທດ ໂດຍເນັ້ນໃສ່ການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍທີ່ດິນ ໃຫ້ສຳເລັດ ແລະ ມີຜົນສັກສິດ;

(6). ສ້າງສະຖານີອຸຕຸນິຍົມໃໝ່ ໃຫ້ໄດ້ 45 ແຫ່ງ, ສະຖານີອຸທົກກະສາດໃໝ່ ໃຫ້ໄດ້ 25 ແຫ່ງ ແລະ ສ້າງສະຖານີວັດແທກຄຸນນະພາບອາກາດຢ່າງໜ້ອຍ ໃຫ້ໄດ້ 9 ແຫ່ງ ໃນຂອບເຂດທົ່ວປະເທດ;

(7). ສູ້ຊົນສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ 14 ອ່າງ ແລະ ອ່າງຮັບນ້ຳຫຼັກຂອງແຂວງ ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດ;

(8). ສ້າງແຜນງານແຫ່ງຊາດ ກ່ຽວກັບການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ແລະ ແຜນງານແຫ່ງຊາດກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃຫ້ສຳເລັດ;

(9). ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານສະໜາມຂີ້ເຫຍື້ອ ທີ່ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ, ໃນນີ້ ຢ່າງໜ້ອຍ ໃຫ້ໄດ້ 5 ຈຸດ ໃນຕົວເມືອງໃຫຍ່.

6. ດ້ານບົດບາດຍິງ-ຊາຍ:

(1). ຊຸກຍູ້ສ້າງເງື່ອນໄຂໃຫ້ພະນັກງານນໍາພາ-ຄຸ້ມຄອງ ທີ່ເປັນເພດຍິງທຸກຂັ້ນ ໂດຍສະເລ່ຍ ໃຫ້ກວມ 20% ຂຶ້ນໄປ;

(2). ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ບັນຈຸຊັບຊ້ອນເຂົ້າເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພດຍິງ ກວມ 30% ຂຶ້ນໄປ;

(3). ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫຼຸດລົງຈາກ 0,459 ໃນປີ 2019 ມາເປັນ 0,430 ໃນປີ 2025;

(4). ດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃຫ້ເພີ່ມຂຶ້ນຈາກ 0,927 ໃນປີ 2019 ມາເປັນ 0,984 ໃນປີ 2025.

7. ດ້ານການຄຸ້ມຄອງບໍລິຫານລັດ:

(1). ຮອດປີ 2025 ສູ້ຊົນສ້າງໜ່ວຍງານບໍລິການຜ່ານປະຕູດຽວຂັ້ນທ້ອງຖິ່ນ ໃຫ້ໄດ້ຕື່ມ 15 ແຫ່ງ (ສະເລ່ຍເພີ່ມຂຶ້ນ 3 ແຫ່ງຕໍ່ປີ) ເພີ່ມຂຶ້ນຈາກປີ 2019 ທີ່ມີຈໍານວນ 43 ແຫ່ງ ມາເປັນ 58 ແຫ່ງ ໃນປີ 2025;

(2). ສ້າງເທດສະບານ/ນະຄອນ ເຊິ່ງເປັນອົງການປົກຄອງທ້ອງຖິ່ນໃນຕົວເມືອງ ຕາມເງື່ອນໄຂ ແລະ ກົດໝາຍ ໂດຍສະເພາະແມ່ນສຸມໃສ່ເມືອງທີ່ເປັນທີ່ຕັ້ງຂອງສໍານັກງານປົກຄອງແຂວງເປັນບຸລິມະສິດ ໃຫ້ໄດ້ຢ່າງໜ້ອຍ 8 ແຫ່ງ;

(3). ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ ຕາມ 7 ດ້ານ ໃຫ້ໄດ້ຢ່າງໜ້ອຍ 2/3 ຫຼື ເທົ່າກັບ 66,66% ຫຼື ຫຼາຍກວ່າ 11 ແຂວງ ຂອງຈໍານວນແຂວງທັງໝົດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານໃຫ້ໄດ້ 1/3 ຫຼື ເທົ່າກັບ 33,33% ຫຼື ຫຼາຍກວ່າ 48 ເມືອງ/ນະຄອນ ຂອງຈໍານວນເມືອງທັງໝົດ, ສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ໄດ້ 2/3 ຫຼື ເທົ່າກັບ 66,66% ຫຼື ຫຼາຍກວ່າ 5.575 ບ້ານ ຂອງຈໍານວນບ້ານທັງໝົດ;

(4). ຊຸກຍູ້ ແລະ ປະກອບເຄື່ອງມື, ອຸປະກອນທີ່ທັນສະໄໝທີ່ຈໍາເປັນໃຫ້ສານປະຊາຊົນສູງສຸດ, ອົງການສອບສວນ-ສືບສວນ, ອົງການໄອຍະການປະຊາຊົນສູງສຸດ;

(5). ອອກຄໍາຖະແຫຼງຂອງໄອຍະການ ໃຫ້ໄດ້ 95% ຂອງຄະດີທີ່ຟ້ອງຂຶ້ນສານທັງໝົດ;

(6). ຕັດສີນ-ພິພາກສາຄະດີ ໃຫ້ບັນລຸໄດ້ 85% ດ້ວຍຄຸນນະພາບທີ່ດີ, ຖືກຕ້ອງກັບກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ;

(7). ຈັດຕັ້ງປະຕິບັດຄໍາຕັດສີນທີ່ຍັງຄ້າງ ແລະ ຄໍາຕັດສີນເຂົ້າໃໝ່ ໃຫ້ໄດ້ 80%, ໃນນັ້ນ 20% ແມ່ນໃຫ້ຈັດຕັ້ງປະຕິບັດສໍາເລັດ ແລະ ປິດສໍານວນຄະດີ.

## ໝວດທີ 2
## ວຽກງານຈຸດສຸມຕົ້ນຕໍ

**ມາດຕາ 5 ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ**

1. ໃຫ້ຖືເອົາບັນຫາການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາ

ຢາເສບຕິດ ເປັນວາລະແຫ່ງຊາດ ເພື່ອໃຫ້ທົ່ວລັດ, ກໍາລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ມີຄວາມຮັບຜິດຊອບ ແລະ ເປັນເຈົ້າການຈັດຕັ້ງປະຕິບັດ ເປັນຂະບວນກວ້າງຂວາງ ແລະ ເລິກເຊິ່ງ;

2. ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍ, ນິຕິກໍາລຸ່ມກົດໝາຍ ແລະ ເພີ່ມທະວີໃນການປັບປຸງລະບອບ, ກົນໄກຄຸ້ມຄອງໃນຂົງເຂດລາຍຮັບໃຫ້ເຂັ້ມງວດ; ສືບຕໍ່ການຫັນເປັນທັນສະໄໝໃນການຄຸ້ມຄອງການເກັບລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ໃຫ້ໄວ ແລະ ກວ້າງຂວາງກວ່າເກົ່າ; ປະຕິບັດມາດຕະການຕາມກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍໃຫ້ບັນດາຫົວໜ່ວຍທຸລະກິດນໍາໃຊ້ລະບົບບັນຊີຢ່າງຖືກຕ້ອງ ແລະ ເປັນເອກະພາບ ແລະ ໃຫ້ເຂົ້າໃນລະບົບອາກອນມູນຄ່າເພີ່ມ ເພື່ອເພີ່ມລາຍຮັບງົບປະມານແຫ່ງລັດ; ຄົ້ນຄວ້າການຫັນລັດວິສາຫະກິດທີ່ບໍ່ມີປະສິດທິຜົນໄປສູ່ຮູບການອື່ນ ຢ່າງສົມເຫດສົມຜົນ;

3. ເອົາໃຈໃສ່ຈັດສັນງົບປະມານສໍາລັບໂຄງການບູລິມະສິດໃນຂະແໜງການທີ່ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຢ່າງມີຈຸດສຸມ;

4. ຄຸ້ມຄອງໜີ້ສາທາລະນະ ໃຫ້ຢູ່ໃນລະດັບທີ່ເໝາະສົມ ໂດຍການປັບປຸງໂຄງສ້າງໜີ້ສິນທີ່ຄຸມເຄືອເປັນເວລາຫຼາຍປີ ດ້ວຍການຫັນໜີ້ເປັນທຶນ ທີ່ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຕົວຈິງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນ ການຂາຍຂຸັບສິນຂອງລັດ, ຊັບພະຍາກອນແຮ່ທາດ, ຮຸ້ນ, ສິດໃນການເຊົ່າສໍາປະທານ ແລະ ຊັບສິນອື່ນໆ ຜ່ານລະບົບການປະມູນຕາມກົດໝາຍ; ພ້ອມກັນນັ້ນ, ກໍ່ໃຫ້ໂຈະການກູ້ຢືມໃໝ່ມາປະຕິບັດໂຄງການທີ່ເພີ່ມຄວາມສ່ຽງໜີ້ສິນລວມ;

5. ສືບຕໍ່ຮັກສາສະຖຽນລະພາບເງິນຕາ ໃຫ້ມີຄວາມໝັ້ນທ່ຽງ ຕາມຂອບແຜນທີ່ກໍານົດໄວ້ ດ້ວຍການນໍາໃຊ້ນະໂຍບາຍເງິນຕາທາງອ້ອມ ແລະ ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃຫ້ມີປະສິດທິຜົນຫຼາຍຂຶ້ນ; ຊຸກຍູ້ ແລະ ສ້າງເງື່ອນໄຂທີ່ເອື້ອອໍານວຍການສະໜອງແຫຼ່ງທຶນ ເພື່ອສົ່ງເສີມການຜະລິດ ແລະ ການບໍລິການທີ່ມີປະສິດທິຜົນ ໃຫ້ສອດຄ່ອງກັບເປົ້າໝາຍບູລິມະສິດຂອງລັດຖະບານ, ການສ້າງຄວາມເຂັ້ມແຂງໃຫ້ພື້ນຖານການຜະລິດພາຍໃນ ແລະ ການສ້າງລາຍຮັບໃຫ້ປະເທດ; ເພີ່ມທະວີການຄຸ້ມຄອງທະນາຄານທຸລະກິດ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃຫ້ເຄື່ອນໄຫວຕາມກົດໝາຍ, ລະບຽບການຢ່າງເຄັ່ງຄັດ, ຄຽງຄູ່ກັບ ການສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍທີ່ແທດເໝາະຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຢ່າງມີປະສິດທິຜົນ ທັງຮັບປະກັນໄດ້ຄວາມໝັ້ນຄົງຂອງລະບົບສະຖາບັນການເງິນ ໃນໄລຍະກາງ ແລະ ໄລຍະຍາວ;

6. ສືບຕໍ່ປັບປຸງບັນດາລະບຽບການ, ກົນໄກ ແລະ ຂັ້ນຕອນໃນການດໍາເນີນທຸລະກິດ ແລະ ການອອກໃບອະນຸຍາດການລົງທຶນ ຕາມຄໍາສັ່ງເລກທີ 02/ນຍ ແລະ ຄໍາສັ່ງເລກທີ 03/ນຍ ຢ່າງມີປະສິດທິຜົນ; ຊຸກຍູ້ ແລະ ດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນນະພາບ ໃຫ້ຫຼາຍຂຶ້ນ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສືບຕໍ່ເພີ່ມທະວີສົ່ງເສີມການລົງທຶນເຂົ້າໃນເຂດເສດຖະກິດພິເສດໃນຂອບເຂດທົ່ວປະເທດ ໃຫ້ເພີ່ມຂຶ້ນ ເພື່ອຍູ້ແຮງໃນການພັດທະນາເສດຖະກິດ ແລະ ສ້າງວຽກເຮັດງານທໍາ;

7. ຊຸກຍູ້ການຜະລິດສິນຄ້າຕາມທ່າແຮງຕົວຈິງຂອງແຕ່ລະທ້ອງຖິ່ນ, ຕາມແລວທາງລົດໄຟລາວ-ຈີນ ແລະ ຕາມແລວທາງເສດຖະກິດເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໂດຍສຸມໃສ່ ຜະລິດສິນຄ້າກະສິກໍາທີ່ມີຕະຫຼາດຮອງຮັບ, ການທ່ອງທ່ຽວ, ການບໍລິການທ່າບົກ, ການຂົນສົ່ງໂລຊິດຕິກ ແລະ ອື່ນໆ;

8. ສືບຕໍ່ການຊອກຫາ, ຂະຫຍາຍຕະຫຼາດ ແລະ ກໍານົດລາຍການສິນຄ້າ ຕາມຄວາມຕ້ອງການຕະຫຼາດພາຍໃນ ແລະ ການສົ່ງອອກສິນຄ້າ ເພື່ອເປັນບ່ອນອີງໃຫ້ພາກສ່ວນກ່ຽວຂ້ອງສ້າງແຜນການຜະລິດໃຫ້ພຽງພໍກັບຄວາມຕ້ອງການ;

9. ເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ຕິດຕາມ, ກວດກາ ການເໜັງຕີງຂອງລາຄາສິນຄ້າ ຢ່າງເປັນລະບົບ ໂດຍສະເພາະ ລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ, ພ້ອມທັງ ກວດກາຄຸນນະພາບ ແລະ ມາດຕະຖານ ຂອງສິນຄ້ານໍາເຂົ້າ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ບໍລິໂພກ;

10. ເອົາໃຈໃສ່ໂຄສະນາ ແລະ ຊຸກຍູ້ສົ່ງເສີມການທ່ອງທ່ຽວ " ລາວທ່ຽວລາວ " ເພື່ອກະຕຸ້ນເສດຖະກິດ, ເປັນເຈົ້າການຊຸກຍູ້ ແລະ ແນະນໍາບັນດາຫົວໜ່ວຍທຸລະກິດທ່ອງທ່ຽວ ປັບປຸງສະຖານທີ່ທ່ອງທ່ຽວ (ທາງປະຫວັດສາດ, ທໍາມະຊາດ ແລະ ວັດທະນະທໍາ) ແລະ ການບໍລິການສະຖານທີ່ພັກ-ຮ້ານອາຫານ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ; ຊຸກຍູ້ ແລະ ຍົກລະດັບຂະບວນການ "ລາວທ່ຽວລາວ, ລາວຜະລິດ ແລະ ຊົມໃຊ້ຜະລິດຕະພັນລາວ";

11. ເພີ່ມທະວີການຄຸ້ມຄອງ, ການຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການການປ້ອງກັນ, ສະກັດກັ້ນ ແລະ ການແກ້ໄຂ ການແຜ່ລະບາດຂອງພະຍາດ ໂຄວິດ-19 ຢ່າງປົກກະຕິ ແລະ ທັນການ. ພ້ອມກັນນັ້ນ, ກໍ່ໃຫ້ມີມາດຕະການ ແລະ ນະໂຍບາຍ ເພື່ອຊຸກຍູ້ ແລະ ແກ້ໄຂຜົນກະທົບທາງດ້ານເສດຖະກິດ ຕໍ່ຫົວໜ່ວຍທຸລະກິດ ແລະ ແຮງງານ ຕາມສະພາບຕົວຈິງ;

12. ເປັນເຈົ້າການຄົ້ນຄວ້າວາງແຜນການຜະລິດ ແລະ ການບໍລິການ ຕາມທ່າແຮງບົ່ມຊ້ອນທີ່ໄດ້ປຽບຂອງຕົນ ເພື່ອນໍາໃຊ້ທາງດ່ວນ, ເສັ້ນທາງລົດໄຟລາວ-ຈີນ ຕາມແລວທາງເສດຖະກິດຕ່າງໆ ຢ່າງມີປະສິດທິຜົນ; ປະສານງານກັນຢ່າງກົມກຽວ ໃນການຈັດຕັ້ງຜັນຂະຫຍາຍທິດການພັດທະນາເຂດແຄວ້ນເພື່ອສ້າງສໍາພັນເສດຖະກິດທີ່ມີປະສິດທິຜົນ ແລະ ມີຈຸດສຸມ, ບໍ່ຊໍ້າຊ້ອນກັນ, ບໍ່ກົດໜ່ວງທ່ວງດຶງ ແລະ ສ້າງຄວາມຫຍຸ້ງຍາກໃຫ້ກັນ, ແຕ່ສະໜັບສະໜູນເຊິ່ງກັນ ແລະ ກັນ;

13. ສົ່ງເສີມການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (PPP) ໃນໂຄງການຂະໜາດໃຫຍ່ ທີ່ໃຊ້ທຶນຮອນ, ເຕັກໂນໂລຊີ ແລະ ນະວັດຕະກໍາສູງ ເພື່ອຫຼຸດຜ່ອນພາລະແບກຫາບດ້ານການເງິນ ແລະ ຄວາມສ່ຽງໃນການລົງທຶນ ຕາມທິດເພີ່ມປະສິດທິພາບ, ປະສິດທິຜົນ, ມີຄວາມໂປ່ງໃສ ແລະ ຍືນຍົງ ໃນການຄຸ້ມຄອງບໍລິຫານໂຄງການ ໂດຍສະເພາະໂຄງການກໍ່ສ້າງໂຄງລ່າງພື້ນຖານ ເຊັ່ນ: ຂົວ, ທາງ, ທ່າເຮືອ, ທ່າບົກ, ໂຄງການພະລັງງານ, ສຶກສາ, ສາທາ (ໂຮງໝໍທັນສະໄໝ) ແລະ ອື່ນໆ;

14. ສຸມໃສ່ສົ່ງເສີມການຜະລິດທີ່ຫຼາກຫຼາຍຕາມຂະແໜງການ ຕິດພັນກັບການຍົກສູງປະສິດທິພາບການຜະລິດ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ສິນຄ້າ ທີ່ຮັບປະກັນທັງປະລິມານ ແລະ ຄຸນນະພາບ; ສົ່ງເສີມ ແລະ ພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ ຢ່າງມີປະສິດທິພາບ.

## ມາດຕາ 6 ການພັດທະນາຊັບພະຍາກອນມະນຸດ ແລະ ກໍາລັງແຮງງານ ໃຫ້ມີຄຸນນະພາບ

1. ສືບຕໍ່ຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ວຽກງານຈຸດສຸມຂອງແຜນພັດທະນາຂະແໜງສຶກສາທິການ ແລະ ກິລາ ເພື່ອຍົກສູງຄຸນນະພາບຂອງຊັບພະຍາກອນມະນຸດ, ເອົາໃຈໃສ່ປັບປຸງຜົນການຮຽນຂອງນັກຮຽນ ໂດຍສະເພາະ ວິຊາພາສາລາວ, ຄະນິດສາດ ແລະ ວິທະຍາສາດສໍາລັບການສຶກສາຂັ້ນພື້ນຖານ ໂດຍການປັບປຸງຫຼັກສູດການຮຽນ-ການສອນ, ປັບປຸງວິທີການສິດສອນຂອງຄູ, ເອົາໃຈໃສ່ຕິດຕາມການປະຕິບັດໜ້າທີ່ຂອງຄູສອນ ແລະ ອໍານວຍການໂຮງຮຽນ, ພ້ອມທັງ ສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ, ເຄື່ອງທົດລອງ ແລະ ນະໂຍບາຍທີ່ຈໍາເປັນ ໃຫ້ແກ່ຄູ ແລະ ນັກຮຽນ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ. ຍົກສູງການສ້າງສີມືແຮງງານທີ່ມີຄຸນນະພາບ ແລະ ຕອບສະໜອງຕາມເງື່ອນໄຂ ແລະ ມາດຕະ

ຖານຂອງຜູ້ປະກອບການ ດ້ວຍການຮ່ວມມືກັບພາກເອກະຊົນ, ຜູ້ປະກອບການ ແລະ ຜູ້ໃຊ້ແຮງງານ ໃນການພັດທະນາຫຼັກສູດ, ການສິດສອນ ແລະ ການຝຶກປະຕິບັດວຽກຕົວຈິງ; ເອົາໃຈໃສ່ສ້າງນັກວິຊາການໃນສາຍວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ;

2. ປັບປຸງກົນໄກການປະສານງານລະຫວ່າງພາກລັດດ້ວຍກັນ, ພາກລັດກັບພາກເອກະຊົນ ໃນການຝຶກ ແລະ ພັດທະນາສີມືແຮງງານ ໃຫ້ມີຄວາມກົມກ່ຽວກັນ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ; ກຳນົດຄວາມຕ້ອງການແຮງງານແຕ່ລະປະເພດ; ປັບປຸງຫຼັກສູດການຝຶກອົບຮົມ ໃຫ້ໄດ້ມາດຖານສາກົນ; ເອົາໃຈໃສ່ແກ້ໄຂບັນຫາການວ່າງງານ ໂດຍສະເພາະແຮງງານທີ່ກັບຄືນຈາກຕ່າງປະເທດ;

3. ສືບຕໍ່ເອົາໃຈໃສ່ບຳລຸງ ແລະ ຍົກລະດັບພະນັກງານແພດໝໍ ແລະ ວິຊາການສາຂາວິຊາຕ່າງໆໃຫ້ກາຍເປັນແພດໝໍໃຫ້ມີຄຸນນະພາບ ແລະ ເປັນມືອາຊີບ; ພ້ອມທັງ ຂະຫຍາຍຕາໜ່າງສາທາລະນະສຸກ ໄປຫາເຂດຫ່າງໄກສອກຫຼີກ. ເພີ່ມທະວີໃນການເຝົ້າລະວັງ, ຕິດຕາມ ແລະ ຕອບໂຕ້ກັບລະບົາດພະຍາດລະບາດ ໂດຍສະເພາະການແຜ່ລະບາດພະຍາດໂຄວິດ-19 ໃຫ້ທັນການ.

## ມາດຕາ 7 ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນເທື່ອລະກ້າວ

1. ສືບຕໍ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕາມທິດ 3 ສ້າງ, ຮັບປະກັນການເຂົ້າເຖິງການບໍລິການການສຶກສາ ແລະ ສາທາລະນະສຸກ ໃຫ້ໄດ້ຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໂດຍພື້ນຖານ;

2. ຊຸກຍູ້ໃຫ້ທຸກພາກສ່ວນໃນສັງຄົມ ປະກອບສ່ວນໂດຍທາງກົງ ແລະ ທາງອ້ອມເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ດ້ວຍຮູບແບບ ແລະ ວິທີການທີ່ສອດຄ່ອງກັບແຕ່ລະກຸ່ມເປົ້າໝາຍໃນເຂດຈຸດສຸມ;

3. ປັບປຸງ ແລະ ສ້າງໂຄງລ່າງພື້ນຖານຊົນນະບົດທີ່ຈຳເປັນ ເພື່ອເອື້ອອຳນວຍໃຫ້ແກ່ການເຂົ້າເຖິງເຂດການຜະລິດ, ເອົາໃຈໃສ່ສົ່ງເສີມວິຊາການດ້ານການຜະລິດ (ການປູກຝັງ-ລ້ຽງສັດ) ໄປຄຽງຄູ່ກັບສະໜອງງົບປະມານໃນການລົງຊຸກຍູ້ຕິດຕາມໃຫ້ພຽງພໍ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນ, ຕະຫຼາດຈຳໜ່າຍ; ຫັນປ່ຽນການຜະລິດທີ່ກະແຈກກະຈາຍ ໄປສູ່ການສ້າງຕັ້ງກຸ່ມການຜະລິດ ແລະ ສະຫະກອນ ເພື່ອສ້າງພື້ນຖານການຜະລິດທີ່ເຂັ້ມແຂງ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນ ຂຶ້ນເທື່ອລະກ້າວ.

## ມາດຕາ 8 ປົກປັກຮັກສາສິ່ງແວດລ້ອມ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ

1. ເພີ່ມທະວີການເຝົ້າລະວັງການປ່ຽນແປງດິນຟ້າອາກາດ ເພື່ອໃຫ້ປະຊາຊົນຮັບຮູ້ຂໍ້ມູນຂ່າວສານ ແລະ ເປັນເຈົ້າການກະກຽມຮັບມືກັບຜົນກະທົບຈາກໄພພິບັດຕ່າງໆຢ່າງທັນການ. ພ້ອມກັນນັ້ນ, ກໍສືບຕໍ່ຜັນຂະຫຍາຍນິຕິກຳຕ່າງໆ ໃນການປົກປັກຮັກສາສິ່ງແວດລ້ອມຢ່າງກວ້າງຂວາງ ແລະ ເລິກເຊິ່ງ; ເອົາໃຈໃສ່ການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງເຂັ້ມງວດ ແລະ ເປັນລະບົບ;

2. ປັບປຸງ ແລະ ຂະຫຍາຍລະບົບເຕືອນໄພໃນຂອບເຂດທົ່ວປະເທດໃຫ້ເປັນລະບົບຄົບຊຸດ ເພື່ອສາມາດຕິດຕາມ, ກວດກາ ແລະ ລາຍງານສະພາບການປ່ຽນແປງດິນຟ້າອາກາດ, ອຸນຫະພູມ, ສະພາບອຸທົກກະສາດຢ່າງທັນການ;

3. ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະຄຸ້ມຄອງໄພພິບັດຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອກຽມພ້ອມສະກັດກັ້ນການຕ້ານ ແລະ ແກ້ໄຂຜົນກະທົບຈາກໄພພິບັດຕ່າງໆ, ການຕ້ານແລ້ງ-ຕ້ານຖ້ວມ;

4. ເອົາໃຈໃສ່ຄຸ້ມຄອງປ່າສະຫງວນ ດ້ວຍການສຳຫຼວດ, ຈັດແບ່ງ ແລະ ໝາຍເຂດປ່າ ແລະ ປະເພດປ່າຕ່າງໆ ໃຫ້ສຳເລັດໂດຍໄວ ພ້ອມທັງມີການຕິດຕາມຢ່າງເປັນປົກກະຕິ.

**ມາດຕາ 9 ເພີ່ມທະວີການຮ່ວມມື, ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ**

1. ສືບຕໍ່ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອ ເຂົ້າໃສ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ພ້ອມທັງການຄຸ້ມຄອງນໍາໃຊ້ຢ່າງມີປະສິດທິຜົນ. ຕັ້ງໜ້າປະຕິບັດພັນທະຂອງລັດຖະບານກັບຄູ່ຮ່ວມພັດທະນາ, ນໍາໃຊ້ສິດທິຕ່າງໆຈາກຂອບການຮ່ວມມືທີ່ ສປປ ລາວ ເປັນສະມາຊິກ ຢ່າງເປັນເຈົ້າການ;

2. ເລັ່ງໃສ່ການພັດທະນາບັນດາໂຄງລ່າງພື້ນຖານທີ່ເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໂດຍສະເພາະ ເສັ້ນທາງດ່ວນ, ທາງລົດໄຟ, ລະບົບໂລຊິດຕິກ ແລະ ການບໍລິການຜ່ານແດນ ເພື່ອອໍານວຍຄວາມສະດວກໃນການຂົນສົ່ງໂດຍສານ ແລະ ສິນຄ້າ ໃຫ້ມີຄວາມວ່ອງໄວ ແລະ ໂລ່ງລ່ຽນ ທັງເປັນການສ້າງລາຍຮັບໃຫ້ເພີ່ມຂຶ້ນ. ປັບປຸງການຜະລິດໃຫ້ໄດ້ມາດຕະຖານເພື່ອສົ່ງອອກ.

**ມາດຕາ 10 ປັບປຸງການຄຸ້ມຄອງບໍລິຫານລັດໃຫ້ມີປະສິທິພາບ, ຮັກສາສະຖຽນລະພາບທາງດ້ານການເມືອງ, ສ້າງສັງຄົມໃຫ້ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ**

1. ສືບຕໍ່ປັບປຸງການຄຸ້ມຄອງບໍລິຫານລັດໃຫ້ມີປະສິດທິພາບ ດ້ວຍການປັບປຸງກົງຈັກບໍລິຫານລັດໃຫ້ມີຄວາມກະທັດຮັດ, ສົມເຫດສົມຜົນ ຕາມທິດທັນເປັນທັນສະໄໝ, ປະຕິບັດກົນໄກປະຕູດຽວຢ່າງມີປະສິດທິຜົນ;

2. ສືບຕໍ່ປັບປຸງ ແລະ ສ້າງກົດໝາຍ, ນິຕິກຳລຸ່ມກົດໝາຍ ໃຫ້ຮັດກຸມ, ມີຄວາມສອດຄ່ອງກັບສະພາບຕົວຈິງ ແລະ ເປັນລະບົບດີຂຶ້ນ; ພ້ອມທັງ, ເພີ່ມທະວີການບັງຄັບໃຊ້ກົດໝາຍ ແລະ ລະບຽບການ ຢ່າງເຄັ່ງຄັດ;

3. ຮັກສາສະຖຽນລະພາບທາງການເມືອງ ໃຫ້ໄດ້ຢ່າງໜັກແໜ້ນ, ຈັດຕັ້ງກຳລັງລົງກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດ ຕາມທິດ 3 ສ້າງ, ແກ້ໄຂບັນຫາຄວາມບໍ່ສະຫງົບໃນເຂດທີ່ຫຼໍ່ແຫຼມ; ແກ້ໄຂບັນຫາຢາເສບຕິດ, ບັນຫາອຸບັດຕິເຫດຕາມທ້ອງຖະໜົນ, ບັນຫາປະກົດການຫຍໍ້ທໍ້ທາງສັງຄົມ ເປັນຕົ້ນການຂີ້ລັກ, ງັດແງະ, ການປຸ້ນຈີ້ຊິງຊັບ, ອັກຄີໄພ, ບັນຫາການຄ້າປະເວນີ, ການຄ້າຂາຍເຖື່ອນ ແລະ ອື່ນໆໃຫ້ຫຼຸດລົງ; ເອົາໃຈໃສ່ແກ້ໄຂບັນຫາຊາຍແດນ ຢ່າງຄ່ອງແຄ້ວ; ຈັດຕັ້ງກຳລັງປະຈຳຕາມບັນດາປ້ອມຍາມ ແລະ ຈຸດຕ່າງໆ ເພື່ອອັດປ່ອງຂ້າມລອຍ ແລະ ແກ້ໄຂບັນຫາການລັກລອບເຂົ້າ-ອອກເມືອງ ຢ່າງເຂັ້ມງວດ. ຕິດຕາມ ແລະ ແກ້ໄຂບັນຫາທີ່ກຸ່ມຄົນບໍ່ດີ ໃສ່ຮ້າຍປ້າຍສີ ແລະ ໂຈມຕີແນວທາງແຜນໂຍບາຍຂອງພັກ-ລັດຖະບານ ໃຫ້ທັນກັບສະພາບການ.

**ມາດຕາ 11 ການຈັດຕັ້ງປະຕິບັດໂຄງການບຸລິມະສິດຂອງແຜນການ 5 ປີ ຄັ້ງທີ IX (2021-2025)**

ການຈັດຕັ້ງປະຕິບັດໂຄງການບຸລິມະສິດ ແມ່ນໃຫ້ຈັດສັນ ແລະ ລະດົມທຶນຮອນຈາກທຸກແຫຼ່ງຢ່າງມີຈຸດສຸມ ເພື່ອຈັດຕັ້ງປະຕິບັດໂຄງການບຸລິມະສິດ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໂດຍໃຫ້ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າກຳນົດໂຄງການທີ່ມີຜົນຕອບແທນທາງດ້ານເສດຖະກິດສູງ ເພື່ອຈະສາມາດລະດົມການລົງທຶນຈາກພາກເອກະຊົນ; ໂຄງການທີ່ມີຜົນປະໂຫຍດຕໍ່ສັງຄົມ ໂດຍລວມແມ່ນໃຫ້ຂໍການຊ່ວຍເຫລືອຈາກຕ່າງປະເທດ ແລະ ໂຄງການທີ່ສ້າງສິ່ງເອື້ອອໍານວຍຄວາມສະດວກໃຫ້ແກ່ການລົງທຶນ ແລະ ການພັດທະນາເສດຖະກິດ-ສັງຄົມ ແມ່ນໃຫ້ເປັນການລົງທຶນຈາກງົບປະມານຂອງລັດ. ການຈັດຕັ້ງປະຕິບັດໂຄງການແມ່ນໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນ: ກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ເງື່ອນໄຂການຄົ້ນຄວ້າພິຈາລະນາໂຄງການ ຕ້ອງເປັນໂຄງການທີ່ມີຄວາມຈຳເປັນ, ປະສິດທິຜົນຕໍ່ເສດຖະກິດສູງ ບໍ່ເປັນການສ້າງໜີ້ໃນອະນາຄົດ.

## ໝວດທີ 3
## ການແບ່ງຄວາມຮັບຜິດຊອບ ແລະ ກົນໄກຈັດຕັ້ງປະຕິບັດ

**ມາດຕາ 12 ການແບ່ງຄວາມຮັບຜິດຊອບການຈັດຕັ້ງປະຕິບັດເປົ້າໝາຍ, ຄາດໝາຍສູ້ຊົນ ແລະ ແຜນວຽກຈຸດສຸມ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ**

1. ເປົ້າໝາຍທີ 1 ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ:

(1). ແຜນວຽກຈຸດສຸມທີ 1: ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນ ແມ່ນມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ບັນດາກະຊວງ ທີ່ກ່າວມານີ້ ຕ້ອງປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ທີ່ກຳນົດໄວ້ໃນແຜນ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(2). ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ ແມ່ນມອບໃຫ້ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ສະຖາບັນວິທະຍາສາດເສດຖະກິດ-ສັງຄົມ ແຫ່ງຊາດຢ່າງປົກກະຕິ ເພື່ອແລກປ່ຽນຂໍ້ມູນ ໃນການຄຸ້ມຄອງ ແລະ ຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກຢ່າງມີປະສິດທິຜົນ;

(3). ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງ ແມ່ນມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບ ກະຊວງການເງິນ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(4). ແຜນວຽກຈຸດສົມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບໃໝ່ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ ແມ່ນມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບ ສະພາການຄ້າ ແລະ ອຸດສາຫະກຳ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

2. ເປົ້າໝາຍທີ 2 ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄ້ວາ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ:

(1). ແຜນວຽກຈຸດສຸມທີ 1 : ການປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພສະນາການ ຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ ແມ່ນມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບ

ຫຼັກ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(2). ແຜນວຽກຈຸດສຸມທີ 2: ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາ ເພື່ອໃຫ້ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທັງເປັນການຮອງຮັບອຸດສາຫະກຳ 4.0 ແມ່ນມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບຫຼັກ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ, ອົງການປົກຄອງຂັ້ນທ້ອງຖິ່ນ, ຊຸມຊົນ, ຜູ້ປົກຄອງ, ພາກສ່ວນເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມຕ່າງໆ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມຕ່າງໆ ໃຫ້ເປັນແຜນງານ, ໂຄງການ ພ້ອມທັງລະດົມຊັບພະຍາກອນ ແລະ ຈັດສັນງົບປະມານທີ່ມີ ໃສ່ບັນດາວຽກຈຸດສຸມບູລິມະສິດທີ່ກຳນົດໄວ້ໃນແຜນ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(3). ແຜນວຽກຈຸດຈຸມທີ 3: ກຳລັງແຮງງານໄດ້ຮັບການພັດທະນາດ້ານສີມື, ຄວາມສາມານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ ແລະ ມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ມີລາຍໄດ້ສູງຂຶ້ນ, ສາມາດຕອບສະໜອງຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ແມ່ນມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບສູນກາງສາຫະພັນແມ່ຍິງລາວ, ສູນກາງຊາວໜຸ່ມ ແລະ ກະຊວງສຶກສາທິການ ແລະ ກິລາ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(4). ແຜນວຽກຈຸດສຸມທີ 4: ສົ່ງເສີມການຄົ້ນຄວ້າ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ແມ່ນມອບໃຫ້ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

3. ເປົ້າໝາຍ 3: ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ:

(1). ແຜນວຽກຈຸດສຸມທີ 1: ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງທຸກຍາກ ໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ, ຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສື່ມວນຊົນໄດ້ຮັບການປັບປຸງດີຂຶ້ນ ແມ່ນມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(2). ແຜນວຽກຈຸດສຸມທີ 2: ໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກ ໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ ແມ່ນມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້,

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງໄປສະນີ ແລະ ຄົມມະນາຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(3). ແຜນວຽກຈຸດສຸມທີ 3: ສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ ແມ່ນມອບໃຫ້ສູນກາງສະຫະພັນແມ່ຍິງ ແລະ ແມ່-ເດັກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບຕາມພາລະບົດບາດຂອງຕົນ ກັບ ຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(4). ແຜນວຽກຈຸດສຸມທີ 4: ສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ ແມ່ນມອບໃຫ້ສູນກາງຊາວໜຸ່ມ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(5). ແຜນວຽກຈຸດສຸມທີ 5: ປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບພາກອິດສະຫລະ ເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິຜົນດີຂຶ້ນ ແມ່ນມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(6). ແຜນວຽກຈຸດສຸມທີ 6: ການກວດກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກເພີ່ມຂຶ້ນເທື່ອລະກ້າວ ແມ່ນມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

4. ເປົ້າໝາຍທີ 4: ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ:

(1). ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ ແມ່ນມອບໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບກະຊວງກະສິກຳ-ປ່າໄມ້, ກະຊວງພະລັງງານ ແລະບໍ່ແຮ່ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(2). ແຜນວຽກຈຸດສຸມທີ 2: ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ກວ້າງຂວາງ ແລະ ເຂົ້າສູ່ລວງເລິກ ແມ່ນມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບຫຼັກ ໂດຍ

ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(3). ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ ແມ່ນມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

5. ເປົ້າໝາຍທີ 5: ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ:

(1). ແຜນວຽກຈຸດສຸມທີ 1: ໂຄງລ່າງພື້ນຖານໄດ້ຮັບການພັດທະນາທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ ແມ່ນມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(2). ແຜນວຽກຈຸດສຸມທີ 2: ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບກະຊວງການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(3). ແຜນວຽກຈຸດສຸມທີ 3: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ ແມ່ນມອບໃຫ້ ບັນດາແຂວງ ແລະ ນະຄອນຫຼວງເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບຂະແໜງການພາຍໃນແຂວງ ແລະ ເມືອງ ຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນການໃຫ້ມີຜົນສຳເລັດຕາມຄາດໝາຍ ທີ່ວາງໄວ້. ພ້ອມກັນນັ້ນ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງມີການປະສານສົມທົບກັນຢ່າງກົມກຽວເພື່ອສ້າງສຳພັນເສດຖະກິດລະຫວ່າງພາກກັບພາກ, ແຂວງກັບແຂວງ ແລະ ເມືອງກັບເມືອງ;

(4). ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແມ່ນມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງແຜນການ ແລະ

ການລົງທຶນ ເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

6. ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ:

(1). ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານ 3 ສ້າງໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ ແມ່ນມອບໃຫ້ ກະຊວງພາຍໃນ ເປັນຜູ້ຮັບຜິດຊອບຫຼັກ ສົມທົບກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍ ຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(2). ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ ແມ່ນມອບໃຫ້ກະຊວງພາຍໃນເປັນຜູ້ຮັບຜິດຊອບຫຼັກ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນການໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

(3). ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ແມ່ນມອບໃຫ້ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນປະເທດ ເປັນຜູ້ຮັບຜິດຊອບ ໂດຍປະສານສົມທົບກັບຂະແໜງການສາຍຕັ້ງຂອງຕົນ ເພື່ອຈັດຕັ້ງຜັນຂະຫຍາຍຄາດໝາຍ, ວຽກງານຈຸດສຸມ ໃຫ້ເປັນແຜນງານ, ໂຄງການ ແລະ ງົບປະມານ ເພື່ອຮັບປະກັນໃຫ້ມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

## ມາດຕາ 13 ກົນໄກຈັດຕັ້ງປະຕິບັດ

1. ລັດຖະບານ ມີໜ້າທີ່:

(1). ໂຄສະນາ, ເຜີຍແຜ່ ແລະ ຜັນຂະຫຍາຍ ມະຕິ XI ຂອງກອງປະຊຸມໃຫຍ່ ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານ ແຫ່ງລັດ 5 ປີ ຄັ້ງທີ IX (2021-2025) ໃຫ້ພະນັກງານລັດຖະກອນທຸກຂັ້ນ ແລະ ປະຊາຊົນບັນດາເຜົ່າ ໃຫ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ຢ່າງກວ້າງຂວາງ ເພື່ອສາມາດນຳໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;

(2). ຊຸກຍູ້, ຄຸ້ມຄອງ ແລະ ຕິດຕາມ ແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ໄປຕາມທິດທາງ, ຄາດໝາຍທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ມະຕິ XI ຂອງພັກ ແລະ ມະຕິ 20/ສພຊ ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ມະຕິ 21/ສພຊ ວ່າດ້ວຍການຮັບຮັງເອົາແຜນງົບປະມານແຫ່ງລັດ 5 ປີ (2021-2025);

(3). ອອກມາດຕະການ ແລະ ນະໂຍບາຍ ໃນແຕ່ລະໄລຍະ ເພື່ອຊຸກຍູ້ ແລະ ເອື້ອອຳນວຍ ໃນການຈັດຕັ້ງປະຕິບັດແຜນການ ປີ ຄັ້ງທີ IX;

(4). ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນ, ແຜນງົບປະມານແຫ່ງລັດ ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ສະພາແຫ່ງຊາດ.

2. ກະຊວງແຜນການ ແລະ ການລົງທຶນ ມີໜ້າທີ່:

(1). ເປັນເຈົ້າການສົມທົບກັບ ບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຢ່າງເປັນລະບົບ ແລ້ວສະຫຼຸບຕີລາຄາ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນ ປະຈຳສົກປີ, ກາງສະໄໝ ແລະ 5 ປີ ຕໍ່ລັດຖະບານ. ພ້ອມກັນນັ້ນ, ຖ້າເຫັນວ່າບັນດາຄາດໝາຍຕົວເລກຕ່າງໆທີ່ກຳນົດໄວ້ນັ້ນ ຫາກບໍ່ສາມາດບັນລຸໄດ້ຕາມຄາດໝາຍ ກໍ່ຕ້ອງໄດ້ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າວາງມາດຕະການ, ສຸມທຶນຮອນ ແລະ ບຸກຄະລາກອນເຂົ້າໃສ່ ເພື່ອໃຫ້ບັນລຸຕາມແຜນການ ວາງອອກ;

(2). ເປັນເຈົ້າການກະກຽມກອງປະຊຸມໂຕະມົນ ເພື່ອລະດົມການຊ່ວຍເຫຼືອທາງການເພື່ອການພັດທະນາເຂົ້າໃສ່ເປົ້າໝາຍການພັດທະນາ;

(3). ປັບປຸງກົນໄກການບໍລິການການລົງທຶນປະຕູດຽວ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສ ເພື່ອດຶງດູດການລົງທຶນຈາກພາກເອກະຊົນພາຍໃນ ແລະ ຕ່າງປະເທດ.

3. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງວຽງຈັນ ມີໜ້າທີ່:

(1). ຜັນຂະຫຍາຍບັນດາທິດທາງ, ຄາດໝາຍ ແລະ ວຽກງານຈຸດສຸມ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເຂົ້າໃນແຜນພັດທະນາ ຂອງຕົນ ໃນແຕ່ລະປີ, ໂດຍໃຫ້ມີການກຳນົດເປັນແຜນງານ ແລະ ໂຄງການ ໃຫ້ມີຄວາມສອດຄ່ອງກັບຄວາມອາດສາມາດຕົວຈິງຂອງງົບປະມານ;

(2). ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ຕ້ອງມີຄວາມສອດຄ່ອງກັນ, ສະໜັບສະໜູນເຊິ່ງກັນ ແລະ ກັນ;

(3). ມີໜ້າທີ່ໃນການຄຸ້ມຄອງ, ຕິດຕາມ ແລະ ສະຫຼຸບສັງລວມລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາຂອງຕົນ ເປັນແຕ່ລະງວດ, 6 ເດືອນ, ປະຈຳປີ, ເຄິ່ງສະໄໝ ແລະ 5 ປີ ແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ;

(4). ຕິດຕາມສະພາບການຈັດຕັ້ງປະຕິບັດຕົວເລກຄາດໝາຍ ແລະ ຕົວຊີ້ບອກຂອງຂະແໜງການຕົນ ເປັນແຕ່ລະໄລຍະ ໂດຍສົມທຽບກັບຄາດໝາຍແຜນການ 5 ປີ ຄັ້ງທີ IX ເມື່ອເຫັນວ່າບໍ່ບັນລຸ ກໍ່ຕ້ອງໄດ້ວາງມາດຕະການ, ນະໂຍບາຍ ແລະ ສຸມທຶນຮອນ ແລະ ບຸກຄະລະກອນເຂົ້າໃສ່ໃຫ້ບັນລຸຜົນ;

(5). ໃຫ້ຄົ້ນຄວ້າກຳນົດແຫຼ່ງທຶນ ເພື່ອມາຈັດຕັ້ງປະຕິບັດບັນໂຄງການບຸລິມະສິດ ທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໂດຍໃຫ້ກຳນົດແຈ້ງໂຄງການຈະນຳໃຊ້ທຶນງົບປະມານລັດ, ທຶນຈາກການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ, ທຶນຈາກການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ, ທຶນຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ ໂດຍທີ່ໂຄງການຕ້ອງເປັນໂຄງການທີ່ມີປະສິດທິຜົນສູງ ແລະ ບໍ່ເປັນການສ້າງໜີ້ສິນໃນອະນາຄົດ;

(6). ມີການປະສານງານກັນ ລະຫວ່າງຂະແໜງການຂັ້ນສູນກາງດ້ວຍກັນ, ລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ແລະ ລະຫວ່າງທ້ອງຖິ່ນດ້ວຍກັນ ຢ່າງມີຄວາມກົມກຽວ, ສອດຄ່ອງ, ສະໜັບສະໜູນເຊິ່ງກັນ ແລະ ກັນ, ມີການແລກປ່ຽນຂໍ້ມູນຂ່າວສານຢ່າງເປັນລະບົບ;

(7). ຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ສ້າງລະບົບໃນການຕິດຕາມ ແລະ ປະເມີນຜົນແຜນພັດທະນາຂອງຕົນຢ່າງເປັນລະບົບ ເພື່ອເຮັດການຕິດຕາມການປະຕິບັດບັນດາຄາດໝາຍ ແລະ ສາມາດລາຍງານໄດ້ຢ່າງເປັນລະບົບ ແລະ ທັນສະພາບການ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຮັບຮູ້ ແລະ ປະຕິບັດ**

ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 15 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ສິ້ນສຸດລົງ ໃນວັນທີ 31 ທັນວາ 2025.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ